ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

=====0000=====

ບໍລິສັດ ອີທີແອລ ມະຫາຊົນ

ສະຫະກອນອອມຊັບ ສິນເຊື່ອ ອທອ

ເລກທີ...118.../ສອສ.ອທອ

ວັນທີ...16/12/14...

## ແຈ້ງການ

ເຖິງ : ບັນດາພະແນກການ, ສາຂາ ອທອ ປະຈຳແຂວງ ແລະ ສະມາຊິກ ສອສ.

ເລື່ອງ : ການກູ້ເງິນຊື້ສິນຄ້າເຄື່ອງເອເລັກໂຕຣນິກ

- ອີງຕາມບົດບັນທຶກກອງປະຊຸມ ສະຫະກອນ ອອມຊັບສິນເຊື່ອ ສະບັບເລກທີ116/ສອສ.ອທອ,ລົງວັນທີ 12/12/2014.
- ອີງຕາມການພົວພັນກັບຮ້ານ S Studio ແລະ ຮ້ານ Sumsung SOKXAY.

ຜູ້ອຳນວຍການ ສະຫະກອນອອມຊັບສິນເຊື່ອ ອທອ ຂໍຖືເປັນກຽດແຈ້ງມາຍັງບັນດາພະແນກການ, ສາຂາ ອທອ ປະຈຳແຂວງເພື່ອແຈ້ງຕໍ່ສະມາຊິກ ສອສ ທຸກທ່ານຊາບ : ປະຈຸບັນ ສອສໄດ້ມີການປ່ອຍກູ້ເພື່ອຊື້ສິນຄ້າເຄື່ອງ ເອເລັກໂຕຣນິກກັບຮ້ານ S Studio ແລະ ຮ້ານ Sumsung SOKXAYດັ່ງນີ້ :

I. ຮູບແບບການກູ້ຢືມ :

1. ຜູ້ໜຶ່ງສາມາດມີຫຼາຍສັນຍາ
2. ລວມມູນຄ່າການກູ້ຢືມຕ້ອງບໍ່ເກີນວົງເງິນເດືອນຄ້ຳປະກັນ
3. ໄລຍະການກູ້ຢືມບໍ່ເກີນ 1 ປີ
4. ອັດຕາດອກເບ້ຍ1.7%ຕໍ່ປີ

II. ວິທີ ແລະ ຂັ້ນຕອນການດຳເນີນການຂໍອະນຸມັດຊື້ຄື :

1. ໃຫ້ພະນັກງານພົວພັນກັບທ່ານ ນ.ມະໄລທິບ ໄທລາວັນ (ບັດປະຈຳຕົວມາພ້ອມ)ເພື່ອລົງທະບຽນ
2. ໃຫ້ພະນັກງານເລືອກເຄື່ອງທີ່ຕົນຕ້ອງການ,ລາຄາ ແລະ ເງື່ອນໄຂຕ່າງໆນຳຮ້ານເພື່ອເອົາມາຢັ້ງຢືນລາຄາເພື່ອສົ່ງຫາ ສອສ ທ່ານ ນ.ມະໄລທິບ ໄທລາວັນ.
3. ພາຍຫຼັງການດຳເນີນຂັ້ນຕອນເອກະສານພາຍໃນ ສອສ ແລ້ວ ໃຫ້ສະມາຊິກນຳເອົາເອກະສານເພື່ອໄປຂໍຮັບເຄື່ອງນຳຮ້ານ S Studio ບ້ານ ວັນຈັນ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ. ໂທຣ: 021-261666, 021-263199 ແລະ Samsung Sokxay ບ້ານ ສີບຸນເຮືອງ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ. ໂທຣ:021-255299.

III. ເງື່ອນໄຂການກູ້ຢືມ

1. ໃຫ້ພະນັກງານເລືອກເຄື່ອງທີ່ຕົນຕ້ອງການ, ລາຄາ ແລະ ເງື່ອນໄຂຕ່າງໆນຳຮ້ານເພື່ອເອົາເອກະສານຢັ້ງຢືນລາຄາເຄື່ອງສົ່ງຫາ ທ່ານ ນ.ມະໄລທິບ ໄທລາວັນ.
2. ພາຍຫຼັງດຳເນີນເອກະສານພາຍໃນ ສອສ ແລ້ວໃຫ້ສະມາຊິກນຳເອົາເອກະສານເພື່ອໄປສະເໜີຂໍຮັບ

ເຄື່ອງນຳຮ້ານ.

3. ການຂົນສົ່ງ,ເງື່ອນໄຂຄ້ຳປະກັນ, ການສົ່ງເສີມການຂາຍເປັນໜ້າທີ່ຂອງຮ້ານດັ່ງກ່າວເປັນຜູ້ຮັບຜິດຊອບ
4. ລາຍການເຄື່ອງທີ່ມີຢູ່ທັງສອງຮ້ານສາມາດເບິ່ງໄດ້ຢູ່ໃນ Web SCC ຂອງ ສອສ Scc.etllao.com. ຫຼື
   - www.facebook.com/SStudioLaos.com
   - www.facebook.com/SamsungBySokxay

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

**ອຳນວຍການ ສອສ ອທອ**

ມີາມາລາ: ຊຽວວິາພະຈັນ

ບ່ອນສົ່ງ :

ທຸກພະແນກ,ສາຂາ ອທອ ເພື່ອຊາບ ແລະ ປະຕິບັດ

ສອສ ເພື່ອຊາບ,ປະຕິບັດ ແລະ ສຳເນົາ